**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງການເງິນ ເລກທີ 0901 /ກງ

ນະຄອນຫຼວງວຽງຈັນ, ວັນທີ 29 ມີນາ 2022

**<u>ແຈ້ງການ</u>**

ຮຽນ: - ທ່ານ ລັດຖະມົນຕີ ບັນດາກະຊວງ ທີ່ນັບຖື;
- ທ່ານ ເຈົ້າຄອງນະຄອນຫຼວງ, ບັນດາ ເຈົ້າແຂວງ, ອົງການທຽບເທົ່າ ທີ່ນັບຖື;
- ບັນດາ ທ່ານ ເຈົ້ານະຄອນ, ເຈົ້າເມືອງ, ເທດສະບານ;
- ບັນດາ ວິສາຫະກິດຂອງລັດ ໃນຂອບເຂດທົ່ວປະເທດ.

ເລື່ອງ: ແຈ້ງການນໍາໃຊ້ປຶ້ມຄູ່ມືຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບປັບປຸງ ປີ 2022.

- ອີງຕາມ ກົດໝາຍ ວ່າດ້ວຍຊັບສິນຂອງລັດ (ສະບັບປັບປຸງ) ສະບັບເລກທີ 14/ສພຊ, ລົງວັນທີ 05 ກໍລະກົດ 2012;
- ອີງຕາມ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 600/ນຍ, ລົງວັນທີ 14 ຕຸລາ 2021 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ.
- ອີງຕາມ ໜັງສືສະເໜີຂອງກົມຄຸ້ມຄອງຊັບສິນແຫ່ງລັດ ສະບັບເລກທີ 0537/ຄຊລ, ລົງວັນທີ 17 ມີນາ 2022.

ກະຊວງການເງິນ ໃນນາມເປັນເຈົ້າການສ້າງ ແລະ ປັບປຸງນິຕິກຳທີ່ຕິດພັນກັບວຽກງານການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ຊຶ່ງຮອດປະຈຸບັນໄດ້ຍົກລະດັບດຳລັດວ່າດ້ວຍການປະມູນຈັດຊື້ສິນຄ້າ, ການກໍ່ສ້າງສ້ອມແປງ ແລະ ການບໍລິການດ້ວຍທຶນຂອງລັດ ສະບັບເລກທີ 03/ນຍ, ລົງວັນທີ 09 ມັງກອນ 2004 ໃນເມື່ອກ່ອນມາ ເປັນກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ພ້ອມທັງສ້າງບົດແນະນຳການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019. ສະນັ້ນ, ຈຶ່ງຈຳເປັນຕ້ອງໄດ້ປັບປຸງປຶ້ມຄູ່ມືຈັດຊື້-ຈັດຈ້າງ ສະບັບເດືອນເມສາ 2009 ມາເປັນປຶ້ມຄູ່ມືຈັດຊື້-ຈັດຈ້າງ ສະບັບປັບປຸງປີ 2022 ເພື່ອໃຫ້ສອດຄ່ອງກັບກົດໝາຍ ແລະ ນິຕິກຳທີ່ນຳໃຊ້ໃນປະຈຸບັນ. ຊຶ່ງປຶ້ມຄູ່ມືຈັດຊື້-ຈັດຈ້າງນີ້ປັບປຸງເພື່ອອຳນວຍຄວາມສະດວກໃນການຈັດຕັ້ງປະຕິບັດຂອບກົດໝາຍໃຫ້ສອດຄ່ອງກັບສະພາບການການເຕີບໂຕຂອງເສດຖະກິດຂອງ ສປປ ລາວ ໃນປະຈຸບັນ ແລະ ທັງໄດ້ກຳນົດກົດລະບຽບ, ຫຼັກການ ແລະ ຂັ້ນຕອນລະອຽດໃນຂັ້ນຕອນການຈັດຊື້-ຈັດຈ້າງ ເພື່ອປະຕິບັດຕາມແຜນການຈັດຊື້-ຈັດຈ້າງ ແລະ ແຜນການຈັດຕັ້ງປະຕິບັດງົບປະມານແຫ່ງລັດຂອງປີງົບປະມານ.

ດັ່ງນັ້ນ, ຈຶ່ງອອກແຈ້ງການມາຍັງບັນດາທ່ານ ເພື່ອຊາບ ແລະ ນຳໃຊ້ເອກະພາບໃນຂອບເຂດທົ່ວປະເທດຕາມແຈ້ງການສະບັບນີ້ດ້ວຍ.

ລັດຖະມົນຕີກະຊວງການເງິນ

ບຸນໂຈມ ອຸບົນປະເສີດ